Coronavirus COVID-19

safe work australia

# COVID-19 ແລະ ສຸຂະພາບ ແລະ ຄວາມປອດໄພໃນການເຮັດວຽກ - ທຸລະກິດ ຂະໜາດນ້ອຍ

## ການປະເມີນແລະຈັດການກັບຄວາມສ່ຽງ

COVID-19 ໄດ້ປ່ຽນແປງວິທີການທີ່ພວກເຮົາທຸກຄົນດຳລົງຊີວິດ ແລະ ເຮັດວຽກ.
ແຕ່ໂລກຂອງທຸລະກິດຂະໜາດນ້ອຍກໍ່ຫັນປ່ຽນໄປເລື້ອຍໆ.
ການປະເມີນຄວາມສ່ຽງດ້ານສຸຂະພາບແລະຄວາມປອດໄພ ຂອງ COVID-19 ແມ່ນບາດກ້າວທີ່ ຈຳເປັນສຳລັບບັນດາທຸລະກິດຂະໜາດນ້ອຍ, ເພື່ອລະບຸ ແລະ ຈັດການຄວາມສ່ຽງຕໍ່ທ່ານ, ພະນັກງານ ແລະ ບັນດາລູກຄ້າ.
ເມື່ອ ດຳເນີນການປະເມີນຄວາມສ່ຽງ, ໃຫ້ຖາມຕົວເອງວ່າ:

- ອັນຕະລາຍແມ່ນຫຍັງ?
- ອັນຕະລາຍອັນໃດທີ່ມັນອາດຈະເກີດແກ່ຜູ້ໃດຜູ້ໜຶ່ງ ແລະ ມັນອາດຈະເປັນໄປໄດ້ແນວໃດ?
- ລະດັບຂອງຄວາມສ່ຽງແມ່ນຫຍັງ?
- ຂ້ອຍສາມາດເຮັດຫຍັງໄດ້ແດ່ໃນການຈັດການຄວາມສ່ຽງ?
- ຈະມີການທົບທວນແລະຕິດຕາມຄວາມສ່ຽງແນວໃດ,ເພື່ອຮັບປະກັນວ່າມາດຕະການຄວບຄຸມໃຊ້ໄດ້,ແລະ ກວດກາຄວາມອັນຕະລາຍໃໝ່ ແນວໃດ?

ການບໍລິຫານຄວາມສ່ຽງ ກຳລັງ ດຳເນີນຢູ່ - ໃຫ້ແນ່ໃຈວ່າຈະປະເມີນຄວາມສ່ຽງໃໝ່ ຫຼື ທີ່ໄດ້ປ່ຽນແປງໄປທີ່ເກີດຂື້ນຈາກ COVID-19, ເຊັ່ນຄວາມສ່ຽງຈາກການຮຸກຮານຂອງລູກຄ້າ, ຄວາມຕ້ອງການເຮັດວຽກສູງ ຫຼື ເຮັດວຽກຢູ່ໂດດດ່ຽວ. ທ່ານຕ້ອງລົມກັບພະນັກງານຂອງທ່ານ. ພ້ອມກັນນັ້ນທ່ານສາມາດ ລະບຸຄວາມສ່ຽງຕ່າງໆ ແລະ ຊອກຫາວິທີການໃນການຈັດການກັບມັນ. ຂໍໃຫ້ທຸກທ່ານຮັກສາໂລກຂອງທຸລະກິດຂະໜາດນ້ອຍໃຫ້ໝູນໄປເລື້ອຍໆ. ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ໄປທີ່ ໜ້າ ເວບໄຊຕ໌ - safeworkaustralia.gov.au.

## ລະຍະຫ່າງກັນທາງຮ່າງກາຍ

ຄວາມສ່ຽງຂອງການ ສຳຜັດ COVID-19 ແມ່ນເພີ້ມຂື້ນເມື່ອເຮັດວຽກໃກ້ຊິດກັບຄົນອື່ນ. ຖ້າເປັນໄປໄດ້, ຝຶກແອບລະຍະຫ່າງກັນທາງຮ່າງກາຍ.
ຈົ່ງພິຈາລະນາ:

- ການອອກແບບແປນສະຖານທີ່ເຮັດວຽກຄືນໃໝ່.
- ຈັດກອງປະຊຸມທີ່ບໍ່ແມ່ນແບບໜ້າ-ຕໍ່-ໜ້າ.
- ຫຼຸດຜ່ອນ ຈຳນວນຄົນໃນພື້ນທີ່ທີ່ໃຊ້ຮ່ວມກັນ

- ຈັດການໃຫ້ແຖວແລະຈຳນວນລູກຄ້າ.

ແລະຖ້າເປັນໄປໄດ້, ໃຫ້ມີລະຍະຫ່ວາງໃນການນັດໝາຍ ເພື່ອ
ຈຳກັດການພົວພັນທາງດ້ານຮ່າງກາຍແລະໃຫ້ແນ່ໃຈວ່າບັນດາພະນັກງານມີເຄື່ອງມື
ຫຼືອຸປະກອນຂອງຕົນເອງ.

ສຳລັບ ຄຳແນະນຳ ສະເພາະດ້ານອຸດສາຫະກຳ ກ່ຽວກັບ COVID-19, ໃຫ້ໄປເບິ່ງທີ່ safeworkaustralia.gov.au.

**ເຮັດຄວາມສະອາດສະຖານທີ່ເຮັດວຽກຂອງທ່ານ**

COVID -19 ແພ່ຂະຫຍາຍໄດ້ໂດຍຜ່ານທາງຝອຍລະອອງທີ່ເກີດຂຶ້ນເມື່ອຜູ້ຕິດເຊື້ອໄອ ຫຼື ຈາມ.
ຜູ້ຄົນສາມາດຕິດເຊື້ອ COVID -19 ໂດຍການ ສຳຜັດກັບຖື້ນທີ່ ທີ່ມີເຊື້ອໂຣກຢູ່.
ໃຫ້ແນ່ໃຈວ່າບ່ອນເຮັດວຽກຂອງທ່ານໄດ້ຮັບການທຳຄວາມສະອາດຢ່າງໜ້ອຍທຸກໆມື້ດ້ວຍສານຊັກຟອກ
ແລະນ້ຳ.
ເມື່ອພື້ນຜິວສະອາດແລ້ວ, ທ່ານສາມາດຂ້າເຊື້ອໄດ້.
ຈັດ ລຳດັບຄວາມສຳຄັນຂອງພື້ນຜິວເຮັດຄວາມສະອາດທີ່ຖືກ ສຳຜັດເລື້ອຍໆ.
ຖ້າທ່ານມີກໍລະນີຂອງ COVID-19 ຢູ່ບ່ອນເຮັດວຽກ,
ບ່ອນເຮັດວຽກຂອງທ່ານຈະຕ້ອງໄດ້ທຳຄວາມສະອາດແລະຂ້າເຊື້ອຢ່າງລະອຽດກ່ອນທີ່ຄົນຈະກັບມາ.

ສຳ ລັບ ຄຳ ແນະ ນຳ ສະເພາະດ້ານອຸດສາຫະ ກຳ ກ່ຽວກັບ COVID-19, ໃຫ້ໄປທີ່ safeworkaustralia.gov.au.

**ເວັບໄຊຕ໌ Safe Work Australia COVID-19**

Safe Work Australia ໄດ້ພັດທະນາ ຄຳແນະນຳໃໝ່
ເພື່ອຊ່ວຍໃຫ້ບັນດາທຸລະກິດຂະໜາດນ້ອຍເຂົ້າໃຈກ່ຽວກັບໜ້າທີ່ຕໍ່ສຸຂະພາບແລະຄວາມປອດໄພໃນການເ
ຮັດວຽກຂອງພວກເຂົາ, ແລະຈັດການຄວາມສ່ຽງທີ່ເກີດຂຶ້ນຈາກ COVID-19.
safeworkaustralia.gov.au ມີຂໍ້ມູນກ່ຽວກັບຫົວຂໍ້ຕ່າງໆເຊັ່ນວ່າ ທຳການປະເມີນຄວາມສ່ຽງຢ່າງໃດ,
ລະຍະຫ່າງກັນທາງຮ່າງກາຍ, ສຸຂະອະນາໄມ, ອຸປະກອນປ້ອງກັນສ່ວນຕົວ, ສຸຂະພາບຈິດ, ແລະ
ການທຳຄວາມສະອາດ.
ໃຊ້ເຄື່ອງມືການກັ່ນກອງເນື້ອຫາ(content filtering tool)ເພື່ອຊອກຫາຂໍ້ມູນທີ່ກ່ຽວຂ້ອງກັບທຸລະກິດແລະ
ອຸດສາຫະກຳ ຂະໜາດນ້ອຍຂອງທ່ານ, ພ້ອມທັງຊັບພະຍາກອນທີ່ໃຊ້ໄດ້ເຊັ່ນ:
ລາຍການກວດກາສະຖານທີ່ເຮັດວຽກ ແລະ ໂປສເຕີ.
ສຳລັບ ຄຳແນະນຳ ສະເພາະ ສຳລັບອຸດສະຫະກຳ ຂອງທ່ານ, ໃຫ້ໄປທາງ ອອນໄລນ໌ ດຽວນີ້ -
safeworkaustralia.gov.au.